ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງຄຳມ່ວນ
ຄະນະປະຈຳ

ເລກທີ.149.../ຄປຈ.ສພຂ
ຄຳມ່ວນ,ວັນທີ 21...ທັນວາ...2021.....

ມະຕິ
ວ່າດ້ວຍການຮັບຮອງເອົາເຄື່ອງໝາຍ ແລະ ກາໝາຍ
ຂອງສະພາປະຊາຊົນແຂວງຄຳມ່ວນ

- ອີງຕາມ: ມາດຕາ 90 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015;
- ອີງຕາມ: ຄຳແນະນຳ ຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບເຄື່ອງໝາຍ ແລະ ກາໝາຍ ຂອງສະພາປະຊາຊົນຂັ້ນແຂວງ, ສະບັບເລກທີ 12 /ຄປຈ, ລົງວັນທີ 26/11/2021;
- ອີງຕາມ: ມະຕິວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ (ສະບັບປັບປຸງ), ສະບັບເລກທີ 145/ຄປຈ.ສພຂ, ລົງວັນທີ 20 ທັນວາ 2021;

ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ຕົກລົງ:

ມາດຕາ 1 **ຮັບຮອງເອົາເຄື່ອງໝາຍ ແລະ ກາໝາຍ ຂອງສະພາປະຊາຊົນແຂວງຄຳມ່ວນ** ເປັນຮູບວົງມົນພື້ນສີຟ້າອ່ອນ, ດ້ານເທິງມີຮູບທຸງຊາດ, ໃຈກາງວົງມົນມີຮູບປຶ້ມກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງວາງຢູ່ເທິງຂັນ; ດ້ານລຸ່ມມີຮູບເຄິ່ງກົງຈັກເປັນແຂ້ວເຟືອງ ແລະ ໂບສີແດງ ຂຽນອັກສອນ "**ສະພາປະຊາຊົນຂັ້ນແຂວງ**" ສອງຂ້າງອ້ອມດ້ວຍຮວງເຂົ້າສຸກເປັນຮູບເຟືອງພະຈົນ ແລະ ໂບສີ ແດງຂຽນອັກສອນ "**ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນະຖາວອນ**" ແລະ ມີຂອບວົງມົນອ້ອມຮອບນອກເປັນສີນ້ຳຄຳ.

ຮູບແບບ:



ສແກນດ້ວຍ CamScanner

ມາດຕາ 2 ຄວາມໝາຍຂອງເຄື່ອງໝາຍ ແລະ ກາໝາຍ ຂອງສະພາປະຊາຊົນແຂວງຄຳມ່ວນ ມີດັ່ງນີ້:

- ຮູບທຸງຊາດ ແມ່ນສັນຍາລັກຂອງຄວາມເປັນຊາດ, ມີອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ລວມທັງເຂດນ່ານນ້ຳ ແລະ ນ່ານຟ້າ, ເປັນປະເທດເອກະພາບຂອງທຸກຊົນເຜົ່າ ຊຶ່ງບໍ່ສາມາດຕັດແຍກອອກຈາກກັນໄດ້;

- ປຶ້ມກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງວາງຢູ່ເທິງຂັນ ເປັນສັນຍາລັກ ຂອງການຍົກສູງສະຖານະພາບ ກົດໝາຍຂອງປະຊາຊົນ, ຜົນລະເມືອງ ການເຄື່ອນໄຫວວຽກງານຕ້ອງບົນພື້ນຖານການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ; ທັງເປັນສັນຍາລັກຂອງຄັງຄວາມຮູ້ ແລະ ສະຕິປັນຍາ ຂອງນັກຮຽນຮູ້ປັນຍາຊົນ;

- ຮູບຮວງເຂົ້າສຸກເປັນຮູບເຟືອງພະຈັນ ສະແດງເຖິງຄວາມອຸດົມສົມບູນທາງດ້ານກະສິກຳ ເປັນສັນຍາລັກຂອງຊາວກະສິກອນ ທີ່ເປັນກ້ອນກຳລັງແຮງພື້ນຖານຂອງປະເທດຊາດ;

- ຮູບເຄື່ອງກົງຈັກເປັນແຂ້ວເຟືອງ ເປັນສັນຍາລັກຂອງຊົນຊັ້ນກຳມະກອນ ທີ່ຈະພັດທະນາປະເທດກ້າວໄປສູ່ອຸດສາຫະກຳທີ່ທັນສະໄໝເທື່ອລະກ້າວ;

- ພື້ນສີຟ້າອ່ອນ ໝາຍເຖິງຄວາມອຸດົມຮັ່ງມີຂອງຊັບພະຍາກອນທຳມະຊາດ;

- ຂອບວົງມົນອ້ອມຮອບນອກ ໝາຍເຖິງສາຍສຳພັນອັນໜຶ່ງອັນດຽວ ຂອງບັນດາຊົນຄົນໃນສັງຄົມ ກັບສະພາປະຊາຊົນຂັ້ນແຂວງ ຊຶ່ງບໍ່ສາມາດຕັດແຍກອອກຈາກກັນໄດ້.

ມາດຕາ 3 ການຄຸ້ມຄອງນຳໃຊ້ເຄື່ອງໝາຍ ແລະ ກາໝາຍ ຂອງສະພາປະຊາຊົນແຂວງຄຳມ່ວນ ມີດັ່ງນີ້:

- ໃຊ້ຕິດຢູ່ສະຖານທີ່ສຳຄັນຕ່າງໆ ຂອງສະພາປະຊາຊົນຂັ້ນແຂວງ, ສຳລັບຂະໜາດແມ່ນອີງຕາມຄວາມເໝາະສົມໃນການນຳໃຊ້ຕົວຈິງ;

- ເຮັດເປັນຫຼຽນກາ ເພື່ອໃຊ້ເປັນກາໝາຍ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ມີຂະໜາດເສັ້ນຜ່າໃຈກາງ 3 ຊັ່ງຕິແມັດ ແລະ ໃຫ້ເລີ່ມປະຕິບັດແຕ່ສະພາປະຊົນແຂວງຄຳມ່ວນ ຊຸດທີ II ເປັນຕົ້ນໄປ.

- ໃຊ້ພິມໃສ່ເຄື່ອງຂອງທີ່ລະນຶກຕ່າງໆ ທີ່ສະພາປະຊາຊົນຂັ້ນແຂວງ ເຫັນວ່າເໝາະສົມ.

ມາດຕາ 4 ບັນດາອົງການຈັດຕັ້ງພັກ-ລັດ, ອົງການປົກຄອງທ້ອງຖິ່ນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ອົງການຈັດຕັ້ງມະຫາຊົນ, ພາກສ່ວນທີ່ກ່ຽວຂ້ອງ, ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 5 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຕາງໜ້າ ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ

ປະທານ

ສແກນດ້ວຍ CamScanner